ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

********************

ແຂວງສະຫວັນນະເຂດ
ພະແນກອຸດສາຫະກຳ-ການຄ້າ
ຄະນະກຳມະການຂາຍໄມ້ຂັ້ນແຂວງ

ເລກທີ 0539 /ອຄ.ສຂ
ວັນທີ 20 MAR 2017

# ແຈ້ງການ

ເຖິງ: - ທ່ານ ປະທານສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ
- ທ່ານ ປະທານສະພາການຄ້າ ແລະ ອຸດສາຫະກຳປະຈຳ ແຂວງສະຫວັນນະເຂດ
- ສະມາຄົມອຸດສາຫະກຳປຸງແຕ່ງໄມ້ແຫ່ງຊາດ ແລະ ສະມາຄົມເຟີນີເຈີ້ລາວ
- ອຳນວຍການໂຮງງານປຸງແຕ່ງໄມ້ ແລະ ເຟີນີເຈີ້ໄມ້ສຳເລັດຮູບທົ່ວປະເທດ

ເລື່ອງ: ການປະມູນຂາຍໄມ້ຍຶດຢູ່ແຂວງສະຫວັນນະເຂດ ຄັ້ງທີ II ຈຳນວນ 03 ສະບັບ(03 ລົດ) ບໍລິມາດລວມ 563,754 ແມັດກ້ອນ(ຫ້າຮ້ອຍຫົກສິບສາມຈຸດເຈັດຫ້າສີ່).

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ ລົງວັນທີ 13 ພຶດສະພາ(05) 2016 ວ່າດ້ວຍ ການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນ, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມ ຄຳສັ່ງແນະນຳຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 0336/ອຄ.ກຂອ ລົງວັນທີ 13 ມີນາ(03) 2017 ເລື່ອງ ແນະນຳການຈັດຕັ້ງປະມູນຂາຍໄມ້ທີ່ຍຶດເປັນຂອງລັດ.
- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງງສະຫວັນນະເຂດ ຂໍ້ຕົກລົງ ເລກທີ 1925/ຈຂ.ສຂ ວັນທີ 22 ທັນວາ(12) 2016 ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຂາຍໄມ້ຂັ້ນແຂວງ.

ພະແນກອຸດສາຫະກຳ ແລະ ການຄ້າແຂວງສະຫວັນນະເຂດ(ຄະນະກຳມະການຂາຍໄມ້ຂັ້ນແຂວງ) ຂໍຖືເປັນກຽດຢ່າງສູງ ແຈ້ງການມາຍັງບັນດາທ່ານ ເພື່ອຊາບກ່ຽວກັບການຈັດຕັ້ງປະມູນໄມ້ຍຶດຂອງແຂວງສະຫວັນນະເຂດ ເຊິ່ງມີລາຍລະອຽດດັ່ງນີ້:

## I. ຊະນິດໄມ້ ບໍລິມາດໄມ້

**<u>ສະບັບທີ 01:</u>** ຈຳນວນ 4.718 ຕັບ/ເສັ້ນ(ສີ່ພັນເຈັດຮ້ອຍສິບແປດຕັບ/ເສັ້ນ), ບໍລິມາດ 219,979 ແມັດກ້ອນ(ສອງຮ້ອຍສິບເກົ້າຈຸດເກົ້າເຈັດເກົ້າແມັດກ້ອນ) ຂອງລົດ 298,964 ແມັດກ້ອນ ສະໜາມ II ຢູ່ເດີ່ນ ປກສ ແຂວງ, ຄ້າຍ ປກສ ແດນສະຫວັນ ເມືອງເຊໂປນ ແລະ ສະໜາມພູຕູບມູບ ເມືອງ ພີນ.

*** ໄມ້ຍຶດ ຢູ່ເດີ່ນ ປກສ ແຂວງ :**

| ລ/ດ | ລາຍການ | ຈຳນວນຕັບ | ບໍລິມາດແມັດກ້ອນ |
|---|---|---|---|
| 01 | ໄມ້ປະດົງຕັບ | 168 | 7,789 |

| | | | |
|---|---|---|---|
| 02 | ໄມ້ດູ່ຕັບ | 402 | 30,379 |
| 03 | ໄມ້ແຕ້ຄ່າຕັບ | 45 | 3,625 |
| **ລວມ** | | **615** | **41,793** |

**❋ ໄມ້ຍຶດຢູ່ ຖ້າຍ ປ ກ ສ ແຂວງສະຫວັນ :**

| ລ/ດ | ລາຍການ | ຈຳນວນຕັບ/ເສັ້ນ | ບໍລິມາດແມັດກ້ອນ |
|---|---|---|---|
| 01 | ໄມ້ປະດົງແປຮູບ | 799 | 15,668 |
| 02 | ໄມ້ແຕ້ຄ່າຕັບ | 12 | 4,230 |
| 03 | ໄມ້ດູ່ຕັບ | 1.274 | 54,756 |
| **ລວມ** | | **2.085** | **74,654** |

**❋ ໄມ້ຍຶດສະໜາມພູ ຕູບມູບ :**

| ລ/ດ | ລາຍການ | ຈຳນວນຕັບ/ເສັ້ນ | ບໍລິມາດແມັດກ້ອນ |
|---|---|---|---|
| 01 | ໄມ້ປະດົງແປຮູບ | 243 | 5,483 |
| 02 | ໄມ້ດູ່ຕັບ | 1.732 | 92,865 |
| 03 | ໄມ້ແຕ້ຄ່າຕັບ | 31 | 3,967 |
| 04 | ໄມ້ແຕ້ຂໍຕັບ | 10 | 0,555 |
| 05 | ໄມ້ກະຈະຕັບ | 2 | 0,662 |
| **ລວມ** | | **2.018** | **103,532** |

(ລາຍລະອຽດມີຕາຕະລາງລາຄາຕິດຂັດໃນຊອງປະມູນ)

**<u>ສະບັບທີ 02:</u>** ຈຳນວນ 93 ທ່ອນ, ບໍລິມາດ 275,374 ແມັດກ້ອນ(ສອງຮ້ອຍເຈັດສິບຫ້າຈຸດສາມເຈັດສີ່), ສະໜາມ II ຢູ່ ຈຸດຫ້ວຍປະໃຍ ບ້ານ ພູຜານາງ ເມືອງ ທ່າປາງທອງ ແຂວງ ສະຫວັນນະເຂດ ລະອຽດມີ:

- ໄມ້ຍາງທ່ອນ ຈຳນວນ 83 ທ່ອນ, ບໍລິມາດ 258,882 ແມັດກ້ອນ.
- ໄມ້ແຄນທອງທ່ອນ ຈຳນວນ 01 ທ່ອນ, ບໍລິມາດ 2,255 ແມັດກ້ອນ.
- ໄມ້ແຄນຫີນທ່ອນ ຈຳນວນ 01 ທ່ອນ, ບໍລິມາດ 0,770 ແມັດກ້ອນ.
- ໄມ້ຈິກທ່ອນ ຈຳນວນ 03 ທ່ອນ, ບໍລິມາດ 2,476 ແມັດກ້ອນ.
- ໄມ້ຊີທ່ອນ ຈຳນວນ 05 ທ່ອນ, ບໍລິມາດ 10,991 ແມັດກ້ອນ.

(ລາຍລະອຽດມີຕາຕະລາງລາຄາຕິດຂັດໃນຊອງປະມູນ)

**<u>ສະບັບທີ 03:</u>** ຈຳນວນ 384 ຕັບ/ແປຮູບ ແລະ 12 ເສົາ, ບໍລິມາດ 68,401 ແມັດກ້ອນ(ຫົກສິບແປດຈຸດສີ່ສູນໜຶ່ງ), ສະໜາມ II ຢູ່ເດີ່ນກອງບັນຊາການທະຫານເມືອງທ່າປາງທອງ .

- ໄມ້ແດງແປຮູບ ຈຳນວນ 384 ຕັບ, ບໍລິມາດ 62,214 ແມັດກ້ອນ.
- ໄມ້ແດງ ຈຳນວນ 12 ເສົາ, ບໍລິມາດ 6,187 ແມັດກ້ອນ.

(ລາຍລະອຽດມີຕາຕາລາງລາຄາຕິດຂັດໃນຊອງປະມູນ)

**II. ວ່າດ້ວຍເງື່ອນໄຂຜູ້ເຂົ້າຮ່ວມປະມູນໄມ້:**

1. ແມ່ນບໍລິສັດ/ໂຮງງານປຸງແຕ່ງໄມ້ທີ່ໄດ້ຜ່ານການດັດສົມ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດດ້ານການຜະລິດ ແລະ ປຸງ

ແຕ່ງໄມ້ທີ່ຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ.

2. ມີໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນ, ໃບອະນຸຍາດດຳເນີນກິດຈະການໂຮງງານປຸງແຕ່ງໄມ້ ແລະ ໃບອະນຸຍາດອື່ນໆຖືກຕ້ອງຕາມລະບຽບຫຼັກການ ແລະ ຕ້ອງເປັນໂຮງງານທີ່ບໍ່ເຄີຍເຮັດຜິດກ່ຽວກັບທຸລະກິດໄມ້, ບໍ່ມີໜີ້ສິນຄ້າງຊຳລະພັນທະໄມ້ກັບທາງພາກລັດ.

3. ເປັນສະມາຊິກຂອງສະມາຄົມປຸງແຕ່ງໄມ້ປະຈຳແຂວງ ຫຼື ສະມາຊິກສະມາຄົມຄົມປຸງແຕ່ງໄມ້-ເຟີນີເຈີ້ລາວ.

4. ມີໃບຢັ້ງຢືນຖານະການເງິນ(Bank statement)ຈາກທະນາຄານ ທີ່ມີມູນຄ່າຫຼາຍກວ່າມູນຄ່າສະເໜີການປະມູນ.

5. ໃນການເຂົ້າຮ່ວມການປະມູນຊື້ໄມ້ ຜູ້ເຂົ້າປະມູນຕ້ອງສົ່ງຊອງປະມູນມາຍັງຄະນະກາມະການປະມູນໄມ້ຂັ້ນແຂວງ ຈຳນວນ 02 ຊອງຄື:

- ຊອງເງື່ອນໄຂຂອງໂຮງານທີ່ເຂົ້າຮ່ວມປະມູນ(ເອກກະສານຕ່າງໆຂອງໂຮງງານໄມ້).
- ຊອງໃສ່ລາຄາປະມູນຊື້ໄມ້ຂອງທາງໂຮງງານ.

5. ໂຮງງານປຸງແຕ່ງໄມ້ ຫຼື ເຟີນີເຈີ້ທີ່ຊະນະການປະມູນໃຫ້ປະສານສົມທົບກັບຄະນະກຳມະການຂາຍໄມ້ຂັ້ນແຂວງ ເພື່ອເຊັນສັນຍາຊື້ - ຂາຍ ແລະ ສະໂນດນຳສົ່ງສັນຍາຊື້ - ຂາຍ ໄປຈົດທະບຽນຢູ່ຫ້ອງການຄຸ້ມຄອງຊັບສິນຂອງລັດ ພ້ອມທັງສຳລະພັນ ທະໄມ້ໃຫ້ສຳເລັດຕາມລະບຽບການ, ຖ້າຜູ້ຊະນະການປະມູນບໍ່ເຂົ້າມາເຮັດສັນຍາ ພາຍໃນກຳນົດ 05 ວັນລັດຖະການ, ແມ່ນມອບໃຫ້ຜູ້ປະມູນໄດ້ອັນດັບທີ 2 ເປັນຜູ້ຈັດຕັ້ງປະຕິບັດການເຊັນສັນຍາຊື້-ຂາຍ ແລະ ມອບພັນທະໄມ້ແທນໂດຍບໍ່ມີການຕໍ່ລອງໃດທັງສິ້ນ.

6. ລາຄາປະມູນຊື້ຕ່ຳສຸດບໍ່ໃຫ້ຫຼຸດລາຄາກາງທີ່ຄະນະກາມະການໄດ້ກຳນົດໄວ້ຕາມແຕ່ລະລົດ ແລະ ບໍ່ໃຫ້ເລືອກເອົາສະເພາະໄມ້ທີ່ທາງໂຮງງານຕ້ອງການຢ່າງເດັດຂາດ.(ໝາຍຄວາມວ່າປະມູນລົດໃດແມ່ນປະມູນໝົດລົດ)

7. ໃນລາຄາປະມູນນີ້ ແມ່ນສະເພາະແຕ່ລາຄາພັນທະໄມ້, ບໍ່ໄດ້ລວມຄ່າອາກອນຕ່າງໆເຂົ້າ.

8. ລາຄາປະມູນແມ່ນລາຄາສົ່ງເສີມໃຫ້ນຳເອົາໄມ້ປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ.

**III. ວັນ, ເວລາ ແລະ ຄ່າຊອງປະມູນ**

- ກຳນົດເວລາຂາຍຊອງປະມູນໄມ້: ແຕ່ວັນທີ 20 ມີນາ(03) 2017 ເຖິງວັນທີ 06 ເມສາ(04) 2017.
- ກຳນົດການລົງກວດກາເບິ່ງສະໜາມໄມ້ ແລະ ໄມ້ ວັນທີ 04- 05 ເມສາ (04) 2017.
- ກຳນົດເປີດຊອງປະມູນໄມ້: ເວລາ 09:00ໂມງ ຂອງວັນທີ 07 ເມສາ(04) 2017.
- ສະຖານທີ່: ຫ້ອງປະຊຸມຊັ້ນ II ພະແນກອຸດສາຫະກຳ-ການຄ້າແຂວງສະຫວັນນະເຂດ.
- ສຳລັບຊອງປະມູນໃຫ້ພົວພັນຊື້ໄດ້ທີ່ພະແນກອຸດສາຫະກຳ-ການຄ້າ(ຂະແໜງການນຳເຂົ້າ ແລະ ສົ່ງອອກ) ໃນລາຄາຊອງລະ 1,000,000 ກີບ (ໜຶ່ງລ້ານກີບ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານຜູ້ທີ່ມີຄວາມສົນໃຈຕ້ອງການປະມູນໄດ້ຮັບຊາບ.

**ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າແຂວງ**

**(ຄະນະກຳມະການຂາຍໄມ້ຂັ້ນແຂວງ)**

ສີທົນ ນັນທະລາດ
Sithon NANTHARATH

ຕິດຕໍ່ສອບຖາມຂໍ້ມູນ:

ໂທ: (020)99916333